**ມິຊຊາອາທິດທີ 18 ກຳນົດທຳມະດາປີ C**

**ວັນທີ 04 ສິງຫາ 2019**



**ພຣະວໍລະສານໂດຍນັກບຸນລູກາ 12, 13-21**

ມີຄົນຜູ້ໜຶ່ງໃນຝູງຊົນທູນພຣະອົງວ່າ: ພຣະອາຈານເອີຍ, ຂໍບອກອ້າຍຂ້ານ້ອຍປັນມໍລະດົກໃຫ້ຂ້ານ້ອຍດ້ວຍ. ພຣະອົງຊົງຕອບວ່າ: ທ້າວເອີຍ! ໃຜຕັ້ງເຮົາເປັນຜູ້ຕັດສິນຄວາມ ແລະເປັນຜູ້ແບ່ງປັນມໍລະດົກໃຫ້ພວກເຈົ້າ? ແລ້ວພຣະອົງກ່າວກັບຝູງຊົນວ່າ: ຈົ່ງລະວັງຢ່າເປັນຄົນໂລບໂລພາ ຍ້ອນວ່າມະນຸດຈະຮັ່ງມີສີສຸກກໍຕາມ ຊີວິດຂອງເຂົາກໍບໍ່ສຸດແຕ່ນຳສັບສົມບັດນັ້ນດອກ.

ພຣະອົງຍັງກ່າວຄວາມປຽບທຽບນີ້ໃຫ້ພວກເຂົາຟັງວ່າ: ເສດຖີຜູ້ໜຶ່ງໄດ້ໝາກຜົນອຸດົມຈາກໄຮ່ນາຂອງຕົນຈຶ່ງຄິດໃນໃຈວ່າ: ຂ້ອຍຈະເຮັດແນວໃດ ຍ້ອນວ່າບໍ່ມີບ່ອນຈະມ້ຽນພືດຜົນເຫລົ່ານີ້? ແລ້ວເຂົາເວົ້າວ່າ: ຄິດອອກແລ້ວ, ຂ້ອຍຈະມ້າງສາງເກົ່າ, ປຸກສາງໃໝ່ໃຫ້ໃຫຍ່ກວ່າອີກແລ້ວຈະຂົນເຂົ້າສາລີແລະຂອງຕ່າງໆຂຶ້ນມ້ຽນໄວ້ຢູ່ສາງນັ້ນ. ຂ້ອຍຈະເວົ້າກັບຕົວເອງວ່າ: ດຽວນີ້ມີສັບສົມບັດເກັບໄວ້ກິນກຸ້ມຫລາຍປີແລ້ວ. ຈົ່ງພັກຜ່ອນ, ຈົ່ງກິນ, ຈົ່ງດື່ມແລະມ່ວນຊື່ນຍິນດີຕາມໃຈມັກເຖີດ. ແຕ່ພຣະເປັນເຈົ້າກ່າວກັບເຂົາວ່າ: ຄົນໂງ່ເອີຍ! ຄືນນີ້ເອງເຂົາຈະເອົາວິນຍານເຈົ້າໄປ. ແລະສິ່ງທີ່ເຈົ້າໄດ້ສະສົມໄວ້ນັ້ນຈະຕົກເປັນຂອງໃຜ? ຜູ້ໃດທ້ອນໂຮມສັບສົມບັດໃຫ້ຮັ່ງມີເພື່ອຕົວເອງ ບໍ່ແມ່ນເພື່ອພຣະເປັນເຈົ້າ, ກໍຈະເປັນດັ່ງນີ້ແລ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ລກ 12, 13-21**

ບົນເສັ້ນທາງຊຶ່ງພຣະເຢຊູເຈົ້າພ້ອມກັບພວກລູກສິດມຸ່ງສູ່ນະຄອນເຢລູຊາແລມບ່ອນທີ່ພຣະອົງຈະຮັບທໍລະມານແລະຕາຍເພື່ອພວກເຮົາ; ກໍມີຄົນຜູ້ໜຶ່ງໃນຝູງຊົນຂໍໃຫ້ພຣະເຢຊູເຈົ້າຕັດສິນໃຫ້ເຂົາເລື່ອງແບ່ງປັນມໍລະດົກໃນຄອບຄົວຂອງເຂົາ. ແນ່ນອນ, ຄົນຜູ້ນີ້ແລະຝູງຊົນທີ່ຕິດຕາມພຣະເຢຊູເຈົ້າໄປໄດ້ຍິນພຣະອົງເທດສອນກ່ຽວກັບອານາຈັກສະຫວັນແລະເປັນຕົ້ນກ່ຽວກັບສິ່ງທີ່ຈະເປັນມາກັບພຣະອົງຢູ່ນະຄອນເຢລູຊາແລມ. ແທນທີ່ເຂົາຈະຖາມພຣະເຢຊູເຈົ້າກ່ຽວກັບຄໍາສອນຂອງພຣະອົງ, ເຂົາພັດສົນລະວົນນໍາຄວາມຮັ່ງມີສັບສົມບັດໃນໂລກນີ້. ສິ່ງນີ້ອາດຈະເປັນເຫດຜົນໜຶ່ງທີ່ພຣະເຢຊູເຈົ້າຕອບກັບຄົນຜູ້ນັ້ນວ່າ: « ທ້າວເອີຍ! ໃຜຕັ້ງເຮົາເປັນຜູ້ຕັດສິນຄວາມແລະເປັນຜູ້ແບ່ງປັນມໍລະດົກໃຫ້ພວກເຈົ້າ? ». ການທີ່ພຣະເຢຊູເຈົ້າບໍ່ຕອບຄໍາຖາມຂອງຄົນຜູ້ນີ້ບໍ່ໝາຍວ່າພຣະອົງບໍ່ສົນໃຈເຂົາແລະສິ່ງທີ່ເຂົາຕິດພັນ, ແຕ່ພຣະອົງຢາກໃຫ້ເຂົາເຂົ້າໃຈເຖິງຄວາມຮັ່ງມີທີ່ແທ້ຈິງຜ່ານທາງຄວາມປຽບທຽບຂອງຜູ້ຮັ່ງມີທີ່ຄິດຫາແຕ່ຕົວເອງແລະສັບສົມບັດຄວາມຮັ່ງມີໃນໂລກນີ້ແລະລືມຄິດຫາຄວາມຮັ່ງມີໃນໂລກໜ້າ. ເຂົາຄິດວ່າເປັນຄົນສະຫລາດເພາະມີທຸກສິ່ງໃນໂລກເປັນກໍາມະສິດ, ແຕ່ເຂົາລືມໄປຢ່າງໜຶ່ງຄືເຂົາບໍ່ສາມາດເປັນກໍາມະສິດຊີວິດຂອງເຂົາ. ແລະເມື່ອຕາຍໄປແລ້ວເຂົາບໍ່ສາມາດນໍາເອົາສິ່ງໃດໄປນໍາໄດ້ເລີຍ. ດັ່ງນັ້ນພຣະເຢຊູເຈົ້າຈຶ່ງກ່າວກັບຄົນຮັ່ງມີນີ້ວ່າ: « ຄົນໂງ່ເອີຍ! ຄືນນີ້ເອງເຂົາຈະເອົາວິນຍານເຈົ້າໄປ. ແລະສິ່ງທີ່ເຈົ້າໄດ້ສະສົມໄວ້ນັ້ນຈະຕົກເປັນຂອງໃຜ? ».

ຖ້າຄົນຮັ່ງມີໃນເລື່ອງປຽບທຽບນີ້ເປັນຄົນໂງ່, ຄົນທີ່ສະຫລາດຕ້ອງເປັນຄົນແນວໃດ? ຄໍາຕອບນີ້ພວກເຮົາພົບໄດ້ໃນຕອນຕົ້ນຂອງອາຈາພຣະເຈົ້າໃນວັນນີ້ອັນແມ່ນຄົນທີ່ບໍ່ «ໂລບໂລພາ». ໝາຍຄວາມວ່າແນວໃດ? ໝາຍວ່າຄົນທີ່ຮູ້ຈັກຄິດແລະຈໍາແນກສິ່ງໃດສໍາຄັນແລະບໍ່ສໍາຄັນ, ສິ່ງໃດຖາວອນແລະສູນເສຍເປັນ, ສິ່ງໃດຈະໃຫ້ເຮົາຄວາມສຸກທີ່ແທ້ຈິງແລະສິ່ງໃດເປັນຄວາມສຸກຊົ່ວຄາວ. ແນ່ນອນ, ສິ່ງທີ່ສໍາຄັນ, ຖາວອນແລະເປັນຄວາມສຸກທີ່ແທ້ຈິງຂອງພວກເຮົານັ້ນຄືການມີຊີວິດ ແລະແມ່ນຊີວິດທີ່ມີພຣະເຈົ້າແລະຢູ່ກັບພຣະອົງຕະຫລອດໄປ. ສິ່ງນີ້ບໍ່ໝາຍຄວາມວ່າພວກເຮົາບໍ່ອອກແຮງເພື່ອທໍາມາຫາກິນລ້ຽງຊີບຕົວເອງແລະຊ່ວຍເຫລືອຄອບຄົວ, ແຕ່ສິ່ງເຫລົ່ານັ້ນພຣະເຈົ້າຈະປະທານຕື່ມໃຫ້ພວກເຮົາ. ດັ່ງທີ່ພຣະອົງກ່າວວ່າ: « ຢ່າສົນລະວົນໃນເລື່ອງວ່າຈະມີຫຍັງກິນ, ຈະມີຫຍັງດື່ມ; ຢ່າວິຕົກເລີຍ. ຍ້ອນວ່າສິ່ງທັງຫລາຍນີ້ຄົນທົ່ວໄປກໍສະແຫວງຫາ, ແຕ່ພຣະບິດາຂອງພວກເຈົ້າຊົງຊາບສິ່ງທີ່ພວກເຈົ້າຕ້ອງການ. ດ້ວຍເຫດນີ້, ຈົ່ງຊອກສະແຫວງຫາອານາຈັກຂອງພຣະອົງກ່ອນ, ແລ້ວສິ່ງທັງໝົດນັ້ນພວກເຈົ້າຈະໄດ້ຮັບຕື່ມອີກ » (ລກ 12, 29-31). ຄໍາເວົ້າຂອງພຣະເຢຊູເຈົ້ານີ້ເປັນຄໍາເວົ້າທີ່ຕໍ່ຈາກພຣະວໍລະສານຊຶ່ງພວກເຮົາໄດ້ຟັງວັນນີ້. ເປັນເໝືອນຄໍາຕອບສໍາລັບຄົນທີ່ມາຖາມພຣະເຢຊູເຈົ້າກ່ຽວກັບເລື່ອງການແບ່ງປັນມໍລະດົກໃນຄອບຄົວຂອງເຂົາ. ແລະກໍເປັນຄໍາຕອບສໍາລັບພວກເຮົາແຕ່ລະຄົນທີ່ກໍາລັງຊອກຫາຄວາມຮັ່ງມີຊົ່ວຄາວຢູ່ໃນໂລກນີ້. ອາແມນ

ຄຸນພໍ່ ອົງຕອນ ກຽດຕິສັກ